# ພຣະທັມຍອດເພງ


| 1 | 2 | 3 | 4 | 5 | 6 | 7 | 8 |
|---|---|---|---|---|---|---|---|


## ຍອດເພງ

SOLOMON

### 1

1 ບົດຮ້ອງເພງອັນຫນ້າອອນຊອນຂອງກະສັດໂຊໂລໂມນ

**ເຈົ້າສາວແລະບຸດຕຣີຂອງເຢຣູຊາເລັມ**

Colloquy of Bride and Friends

**ຍິງສາວ:**

2 ປາກຂອງອ້າຍໄດ້ຈູບນ້ອງ ຄວາມຮັກຂອງອ້າຍຫວານກວ່ານ້ຳອະງຸ່ນ

3 ຕົວອ້າຍມີກິ່ນຫອມຫວນ ຊື່ຂອງອ້າຍພາໃຫ້ນ້ອງຄິດເຖິງກິ່ນຫອມນັ້ນ ແລະບໍ່ມີຍິງໃດທີ່ຈະບໍ່ຮັກອ້າຍ

4 ຂໍໃຫ້ນ້ອງໄປກັບອ້າຍ ແລະພວກເຮົາພາກັນຫນີ ຈົ່ງເປັນພຣະຣາຊາຂອງນ້ອງ ແລະພານ້ອງເຂົ້າໄປໃນຫ້ອງ
ຂອງອ້າຍ ຖ້າວ່າອ້າຍຢູ່ທີ່ນີ້ ພວກເຮົາທັງສອງກໍຈະມີຄວາມສຸກ ພວກເຮົາຈະດື່ມນ້ຳອະງຸ່ນແລະຊື່ນຊົມໃນ
ຄວາມຮັກ ນ້ອງພໍໃຈທີ່ສຸດທີ່ໄດ້ຮັກກັບອ້າຍ

5 ຍິງນະຄອນເຢຣູຊາເລັມເອີຍ ແສງຕາເວັນທຳໃຫ້ຂ້ອຍແຫລ້ ແຕ່ຍັງສວຍງາມຢູ່ ຕົວຂ້ອຍເປັນສີນ້ຳຕານ
ເຫມືອນຜ້າເຕັນກາງໄວ້ໃນຖິ່ນກັນດານ ແລະມີສີເຫມືອນດັ່ງຜ້າກັ້ງໃນພຣະຣາຊວັງກະສັດໂຊໂລໂມນ

6 ຢ່າຫລຽວເບິ່ງຢ່າງດູຫມິ່ນໃນສີຜິວພັນຂອງຂ້ອຍເພາະຕາເວັນໄດ້ແຜດເຜົາຂ້ອຍ ອ້າຍນ້ອງຂອງຂ້ອຍໃຈຮ້າຍ
ຂ້ອຍ ແລະໃຊ້ຂ້ອຍທຳງານຢູ່ໃນສວນອະງຸ່ນ ຂ້ອຍຈຶ່ງບໍ່ມີເວລາຮັກສາຕົວຂ້ອຍເອງ

7 ທີ່ຮັກຂອງນ້ອງເອີຍ ກະຣຸນາບອກນ້ອງແດ່ວ່າ ອ້າຍຈະພາຝູງສັດຂອງອ້າຍໄປກິນຫຍ້າຢູ່ບ່ອນໃດ ເວລາຕາ
ເວັນທ່ຽງອ້າຍພາພວກມັນຢຸດພັກຢູ່ໃສ ເປັນຫຍັງນ້ອງຈຶ່ງຕ້ອງຊອກຫາອ້າຍ ຢູ່ຖ້າມກາງຝູງສັດຂອງພວກຜູ້ລ້ຽງ
ແກະຄົນອື່ນ

**ຄົນຮັກຂອງນາງ:**

8 ຍິງງາມເດັ່ນໃນຖ້າມກາງຍິງທັງຫລາຍເອີຍ ຖ້າຮ້ອງບໍ່ຮູ້ຈັກບ່ອນຈົ່ງຕິດຕາມຝູງສັດນັ້ນໄປ ແລ້ວນ້ອງຈະພົບ
ເດີ່ນຫຍ້າສຳລັບຝູງແບ້ຂອງນ້ອງ ຢູ່ໃກ້ຜ້າເຕັນຂອງພວກຜູ້ລ້ຽງແກະພຸ້ນ

Colloquy of Bridegroom, Friends, and Bride

9 ທີ່ຮັກຂອງອ້າຍເອີຍ ນ້ອງປຽບເຫມືອນມ້າແມ່ທີ່ທຽມຣົດມ້າຂອງຟາຣາໂອກະສັດແຫ່ງເອຢິບ

10 ນ້ອງເປັ່ງຜົມງາມ ແລະຢ່ອນລົງຕາມຄໍດັ່ງເພັດພອຍ

11 ແຕ່ວ່າອ້າຍຈະເອົາສາຍສ້ອຍຄໍກັບເຄື່ອງເອ້ທີ່ທຳດ້ວຍເງິນໃຫ້ນ້ອງ

**ຍິງສາວ:**

12 ໃນຂນະທີ່ເຈົ້າຊີວິດປະທັບຢູ່ເທິງຕຽງນອນ ກິ່ນນ້ຳຫອມຂອງຂ້ອຍໄດ້ສົ່ງກິ່ນອອກໄປ

13 ຄົນຮັກຂອງຂ້ອຍເຫມືອນດັ່ງຢາງໄມ້ຫອມທີ່ວາງໄວ້ຢູ່ເທິງເອິກຂອງຂ້ອຍ

14 ຄົນຮັກຂອງຂ້ອຍເປັນເຫມືອນດອກໄມ້ປ່າ ຊຶ່ງບານຢູ່ໃນສວນອະງຸ່ນທີເມືອງເອນເກດີ

**ຄົນຮັກຂອງນາງ:**

15 ທີ່ຮັກຂອງອ້າຍເອີຍ ນ້ອງເປັນຍິງທີ່ສວຍງາມທີ່ສຸດ ຕາຂອງນ້ອງສ່ອງແສງດ້ວຍຄວາມຮັກ

**ຍິງສາວ:**

16 ສຸດທີ່ຮັກຂອງນ້ອງເອີຍ ອ້າຍເປັນຊາຍສະງ່າງາມ ແລະເຕັມໄປດ້ວຍຄວາມສຳຣານ ຫຍ້າຂຽວສົດຈະເປັນຕຽງ
ນອນຂອງພວກເຮົາ

17 ຕົ້ນສົນຈະເປັນເສົາເຮືອນຂອງພວກເຮົາ ແລະໄມ້ສົນຈະເປັນເພດານຂອງມັນ

# 2

Chapter 2

1 ນ້ອງເປັນພຽງດອກກຸຫລາບປ່າຢູ່ໃນທົ່ງຊາໂຣນ ແລະເປັນດອກຊ້ອນຢູ່ຕາມຮ່ອມພູ

**ຄົນຮັກຂອງນາງ:**

2 ດອກຊ້ອນຢູ່ກາງຫນາມສັນໃດກໍເຫມືອນຄົນຮັກຂອງອ້າຍຢູ່ໃນຖ້າມກາງຜູ້ຍິງອື່ນສັນນັ້ນ

**ຍິງສາວ:**

3 ເມື່ອປຽບທຽບຄົນຮັກຂອງຂ້ອຍກັບຊາຍຄົນອື່ນ ກໍເຫມືອນຕົ້ນຫມາກໂປມທີ່ຢູ່ຖ້າມກາງຕົ້ນໄມ້ກາງປ່າ ຂ້ອຍ
ຢາກນັ່ງຢູ່ໃຕ້ຮົ່ມຂອງມັນ ແລະຫມາກຂອງມັນກໍຫວານຖືກປາກຂ້ອຍ

4 ເຂົາພາຂ້ອຍໄປໃນງານກິນລ້ຽງ ແລະຍົກທຸງແຫ່ງຄວາມຮັກປົກຫຸ້ມຂ້ອຍໄວ້

5 ເຂົາທຳໃຫ້ຂ້ອຍມີເຫື່ອແຮງດ້ວຍກິນຫມາກອະງຸ່ນ ແລະທຳໃຫ້ຂ້ອຍຊື່ນໃຈດ້ວຍກິ່ນຫມາກໂປມ ຂ້ອຍອ່ອນ
ເພັຽໄປດ້ວຍຄວາມຫລົງໄຫລ

6 ເຂົາເອົາມືກ້ຳຊ້າຍຮອງຫົວຂ້ອຍ ແລະເອົາມືກ້ຳຂວາກອດຂ້ອຍໄວ້

7 ຍິງນະຄອນເຢຣູຊາເລັມເອີຍ ຈົ່ງສັນຍາກັບຂ້ອຍເທີນວ່າ, "ໃນນາມຂອງກວາງແລະເຍືອງ ເຈົ້າຈະບໍ່ປຸກຄວາມ
ຮັກຂອງຂ້ອຍກ່ອນເວລາອັນສົມຄວນ"

**ບົດເພງທີສອງ**

Springtime Rhapsody

**ຍິງສາວ:**

8 ຂ້ອຍໄດ້ຍິນສຽງຄົນຮັກຂອງຂ້ອຍ ເຂົາກຳລັງແລ່ນຢູ່ເທິງພູນ້ອຍ ແລະຟ້າວຂ້າມພູນ້ອຍມາຫາຂ້ອຍ

9 ຄົນຮັກຂອງຂ້ອຍປຽບເຫມືອນເຍືອງ ແລະປຽບເຫມືອນກວາງຫນຸ່ມ ນີ້ເດ່ ເຂົາກຳລັງຢືນຢູ່ທາງດ້ານຫລັງຝາ
ເຮືອນຂ້ອຍ ເຂົາຫລຽວເຂົ້າມາທາງປ່ອງຢ້ຽມ ແລະຄອຍຈອບເບິ່ງຂ້ອຍຕາມປ່ອງລູກກົງໄມ້

10 ຄົນຂອງຂ້ອຍໄດ້ເອີ່ຍປາກຕໍ່ຂ້ອຍວ່າ,ຄົນຮັກຂອງນາງ:"ທີ່ຮັກຂອງອ້າຍຈົ່ງມາພີ້ ສຸດທີ່ຮັກຂອງອ້າຍຈົ່ງມານຳ
ອ້າຍ

11 ຣະດູຫນາວໄດ້ຜ່ານໄປ ຝົນກໍເຊົາຕົກ

12 ຢູ່ຕາມຊົນນະບົດມີດອກໄມ້ເບັ່ງບານອອກມາ ນີ້ເປັນເວລາທີ່ຮ້ອງລຳທຳເພງ ສຽງນົກເຂົາຂັນກໍໄດ້ຍິນໄປທົ່ວ
ທົ່ງນາ

13 ຫມາກເດື່ອກຳລັງເລີ້ມສຸກ ນ້ອງຈະໄດ້ດົມກິ່ນຂອງດອກອະງຸ່ນ ທີ່ຮັກຂອງອ້າຍ ຈົ່ງມາພີ້ ສຸດທີ່ຮັກຂອງອ້າຍ
ຈົ່ງມາກັບອ້າຍ

14 ນ້ອງກຳລັງລີ້ຊ່ອນຕົວຢູ່ດັ່ງນົກເຂົາ ຢູ່ໃນຊ່ອງວ່າງຂອງກ້ອນຫີນ ຂໍໃຫ້ອ້າຍເຫັນຫນ້າອັນເປັນຕາຮັກຂອງນ້ອງ
ແລະຂໍໃຫ້ອ້າຍໄດ້ຍິນສຽງເວົ້າອັນມີສເນ່ຂອງນ້ອງເທີນ

15 ຈົ່ງຈັບພວກຫມາຈອກ ພວກຫມາກຈອກນ້ອຍ ກ່ອນທີ່ພວກມັນຈະທຳລາຍສວນອະງຸ່ນຂອງພວກເຮົາທີ່ກຳລັງ
ເບັ່ງບານ

**ຍິງສາວ:**

16 ຄົນຮັກເປັນຂອງຂ້ອຍ ແລະຂ້ອຍກໍເປັນຂອງເຂົາ ເຂົາລ້ຽງຝູງສັດຢູ່ຖ້າມກາງບ່ອນທີ່ມີດອກຊ້ອນ

17 ຈົນເຖິງຍາມເຊົ້າຊຶ່ງມີລົມພັດມາອ່ອນໆ ແລະຈົນເຖິງຄວາມມືດມົວໄດ້ຈືດຈາງຫາຍໄປ ສຸດທີ່ຮັກຂອງຂ້ອຍເອີຍ ຈົ່ງກັບມາເຫມືອນເຍືອງ ແລະເຫມືອນກວາງຫນຸ່ມທີ່ຢູ່ເທິງພູ

## 3 ຄຳຣຳພຶງຂອງເຈົ້າສາວ

Love’s Dream

1 ຍາມຣາຕຣີການເມື່ອຂ້ອຍນອນຢູ່ ຂ້ອຍຊອກຫາເຂົາຜູ້ນັ້ນ ທີ່ດວງໃຈຂອງຂ້ອຍຮັກໃຄ່ ຂ້ອຍຊອກຫາເຂົາ ແຕ່ກໍບໍ່ພົບ

2 “ບັດນີ້ຂ້ອຍຈະລຸກຂຶ້ນ ແລ້ວຈະທ່ຽວໄປໃນເມືອງໃຫ້ຕລອດ ໄປຕາມທາງນ້ອຍແລະກາງເມືອງ ຂ້ອຍຈະສແວງຫາເຂົາຜູ້ນັ້ນ ທີ່ດວງໃຈຂອງຂ້ອຍຮັກໃຄ່” ຂ້ອຍຊອກຫາເຂົາ ແຕ່ກໍບໍ່ພົບ

3 ຄົນຍາມທີ່ເລາະລຽບໄດ້ເຫັນຂ້ອຍ ແລ້ວຂ້ອຍໄດ້ຖາມເຂົາວ່າ, “ທ່ານເຫັນເຂົາຜູ້ນັ້ນ ທີ່ດວງໃຈຂອງຂ້ອຍຮັກບໍ່”

4 ພໍຂ້ອຍຜ່ານຄົນຍາມພົ້ນມາຫນ້ອຍດຽວ ຂ້ອຍກໍພົບເຂົາຜູ້ນັ້ນ ທີ່ດວງໃຈຂອງຂ້ອຍຮັກ ຂ້ອຍຈັບຕົວເຂົາໄວ້ແຫນ້ນ ແລະບໍ່ຍອມປ່ອຍມືໃຫ້ເຂົາຫລຸດໄປເລີຍ ຈົນຂ້ອຍພາເຂົາໃຫ້ເຂົ້າມາໃນເຮືອນຂອງມານດາຂ້ອຍ ແລະໃຫ້ເຂົ້າມາໃນຫ້ອງຂອງຜູ້ທີ່ໃຫ້ຂ້ອຍໄດ້ເກີດມານັ້ນ

5 ໂອ ເຫລົ່າບຸດຕຣີແຫ່ງເຢຣູຊາເລັມເອີຍ ຂ້ອຍຂໍໃຫ້ເຈົ້າທັງຫລາຍສາບານຕໍ່ເຍືອງ ຫລືກວາງໂຕເມັຽວ່າ ເຈົ້າທັງຫລາຍຈະບໍ່ກຸກວນ ຫລືປຸກຄວາມຮັກໃຫ້ຕື່ນຂຶ້ນຈົນກວ່າຄວາມຮັກຈະຈຸໃຈແລ້ວ

The Groom and His Party Approach

6 ນັ້ນແມ່ນຫຍັງຫນໍທີ່ກຳລັງຂຶ້ນມາຈາກຖິ່ນກັນດານ ດຸດດັ່ງເສົາຄວັນຫອມໄປດ້ວຍກິ່ນເຄື່ອງຫອມ ແລະກຳຍານທຳດ້ວຍເຄື່ອງຫອມຂອງພໍ່ຄ້າ

7 ເບິ່ງແມ, ເປັນພຣະວໍຂອງໂຊໂລໂມນ ຫ້ອມລ້ອມມາດ້ວຍນັກຮົບຜູ້ກ້າຫານຫົກສິບຄົນ ນັກຮົບຜູ້ກ້າຫານຄົນອິສຣາເອນ

8 ເຂົາທັງຫລາຍຖືດາບ ແລະເປັນຜູ້ຊຳນານເສິກ ເຂົາທຸກຄົນເຫນັບກະບີ່ໄວ້ທີ່ຕົ້ນຂາຂອງຕົນ ເພາະຢ້ານພັຍໃນຣາຕຣີການ

9 ກະສັດໂຊໂລໂມນສ້າງພຣະວໍສຳລັບພຣະອົງ ດ້ວຍໄມ້ມາຈາກເລບານອນ

10 ພຣະອົງຊົງທຳເສົາພຣະວໍນັ້ນດ້ວຍເງິນ ແທ່ນປະທັບທຳດ້ວຍຄຳ ແລະເບາະນັ່ງດ້ວຍຜ້າສີມ່ວງ ຂ້າງໃນພຣະວໍນັ້ນເປັນຜ້າເບາະງາມຕ່ຳໂດຍບຸດຕຣີແຫ່ງເຢຣູຊາເລັມ

11 ໂອ ບຸດຕຣີແຫ່ງຊີໂອນເອີຍ ຈົ່ງອອກໄປ ໄປເບິ່ງກະສັດໂຊໂລໂມນເຖີດ ຊົງມຸງກຸດຊຶ່ງພຣະຣາຊຊົນນີໄດ້ສວມໃຫ້ ໃນວັນທີ່ພຣະອົງໄດ້ຊົງອະພິເສກມະເຫສີນັ້ນ ໃນວັນເມື່ອພຣະທັຍຂອງພຣະອົງຊົງເບີກບານຢູ່

## 4 ເຈົ້າບ່າວສັນເສີນເຈົ້າສາວ

The Bride’s Beauty Extolled

1 ທີ່ຮັກຂອງອ້າຍເອີຍ ເບິ່ງແມ, ນ້ອງຊ່າງງາມຫລາຍ ດວງຕາຂອງນ້ອງດັ່ງນົກເຂົາຢູ່ໃນຜ້າຄຸມ ຜົມຂອງນ້ອງດຸດດັ່ງຝູງແບ້ທີ່ເຄື່ອນມາຕາມເນີນພູກີເລອາດ

2 ແຂ້ວຂອງນ້ອງດັ່ງຝູງແກະທີ່ກຳລັງຈະຕັດຂົນ ຊຶ່ງຂຶ້ນມາຈາກການຊຳຣະລ້າງ ມີລູກແຝດຕິດມາທຸກໂຕ ແລະບໍ່ມີໂຕໃດແຫ້ງລູກ

3 ຮີມຝີປາກຂອງນ້ອງແດງດຸດດັ່ງດ້າຍສີຕັບຫມູ ແລະປາກຂອງນ້ອງກໍງາມຂຳ ພວງແກ້ມຂອງນ້ອງ
ເຫມືອນຫມາກພິລາຜ່າກາງຢູ່ໃນຜ້າຄຸມ
4 ລຳຄໍຂອງນ້ອງດຸດດັ່ງປ້ອມຂອງດາວິດທີ່ໄດ້ກໍ່ສ້າງໄວ້ເພື່ອເກັບເຄື່ອງອາວຸດ ມີສ້ອຍຮູບໂລ້ພັນແນວຄ້ອງໄວ້
5 ນົມທັງສອງຂອງນ້ອງດັ່ງລູກສອງໂຕຊຶ່ງເປັນເຍືອງຝາແຝດທີ່ກຳລັງຫາກິນໃນຖ້າມກາງຫມູ່ຕົ້ນດອກຊ້ອນ
6 ຈົນເວລາຄ່ຳ ແລະເງົາຫມົດໄປແລ້ວ ອ້າຍຈະໄປເນີນພູຢາງໄມ້ຫອມ ແລະໄປເນີນພູຜາກຳຍານ
7 ໂອ ທີ່ຮັກຂອງອ້າຍເອີຍ ນ້ອງຊ່າງງາມໄປຫມົດ ໃນຕົວນ້ອງຈະຫາທີ່ຕິບໍ່ໄດ້
8 ຈົ່ງຈາກເລບານອນໄປກັບອ້າຍເຖີດ ເຈົ້າສາວຂອງອ້າຍເອີຍ ຈົ່ງຈາກເລບານອນໄປກັບອ້າຍເນາະ ໃຫ້ລົງໄປ
ຈາກຍອດ  ເຂົາອາມານາ ຈາກຍອດເຂົາເຊນີຣ໌ ແລະຍອດເຂົາເຮີໂມນໄປຈາກຖ້ຳຣາຊສີ ຈາກເຂົາເສືອດາວ
9 ນ້ອງຂອງອ້າຍເອີຍ ນ້ອງໄດ້ປຸ້ນເອົາດວງໃຈຂອງອ້າຍໄປເສັຽແລ້ວ ເຈົ້າສາວຂອງອ້າຍເອີຍ ເຈົ້າໄດ້ປຸ້ນເອົາ
ດວງໃຈຂອງອ້າຍໄປດ້ວຍ ການສາຍຕາພຽງແວບດຽວເທົ່ານັ້ນຫລື ດ້ວຍສ້ອຍຄໍສາຍດຽວຂອງເຈົ້າ
10 ນ້ອງຂອງອ້າຍເອີຍ ເຈົ້າສາວຂອງອ້າຍ ຄວາມຮັກຂອງນ້ອງຊ່າງຫວານກວ່າເຫລົ້າອະງຸ່ນ ແລະກິ່ນນ້ຳມັນຂອງ
ນ້ອງຊ່າງຫອມກວ່າເຄື່ອງເທດທັງຫລາຍ
11 ໂອ ເຈົ້າສາວຂອງອ້າຍເອີຍ ຮີມຝີປາກຂອງນ້ອງປຽບເຫມືອນນ້ຳເຜີ້ງກຳລັງຈະຢົດຍ້ອຍ ນ້ຳເຜີ້ງແລະນ້ຳນົມຢູ່
ໃຕ້ລີ້ນຂອງນ້ອງ ກິ່ນເສື້ອຜ້າຂອງນ້ອງຫອມດຸດດັ່ງກິ່ນມາຈາກເລບານອນ
12 ເຈົ້າສາວຂອງອ້າຍເອີຍ ນ້ອງຂອງອ້າຍປຽບປະດຸດສວນສງວນ ດຸດດັ່ງອຸທຍານທີ່ຫວງຫ້າມໄວ້ ແລະດຸດດັ່ງນ້ຳ
ພຸທີ່ຖືກປະທັບຕຣາໄວ້
13 ຜລິດຜົນຂອງນ້ອງດຸດດັ່ງສວນຕົ້ນພິລາ ອີກທັງຫມາກໄມ້ອັນໂອຊາຢ່າງອື່ນໆ ອີກທັງຫຽນຂາວ ແລະແຝກ
ຫອມ
14 ຕົ້ນແຝກຫອມແລະຕົ້ນຂີ້ຫມິ່ນ ໄມ້ອົ້ຫອມ ແລະຕົ້ນໃບເຕີຍ ອີກທັງຕົ້ນໄມ້ຫອມນາໆຊະນິດສຳລັບທຳກຳຍານ
ຄືຕົ້ນຢາງໄມ້ຫອມ ແລະຕົ້ນອາໂລ ອີກທັງເຄື່ອງຫອມຊັ້ນດີທັງສິ້ນ
15 ຕົວນ້ອງປະດຸດດັ່ງນ້ຳພຸໃນອຸທຍານ ປະດຸດບໍ່ນ້ຳໄຫລ ແລະປະດຸດລຳທານໄຫລຈາກເລບານອນ
16 ໂອ ລົມເຫນືອເອີຍ ຈົ່ງຕື່ນຂຶ້ນເຖີດ ໂອ ລົມໃຕ້ເອີຍ ຈົ່ງພັດມາເຖີດ ຈົ່ງພັດໂຊຍສວນຂອງຂ້ອຍ ເພື່ອຂອງຫອມ
ໃນສວນນັ້ນຈະຫອມຟຸ້ງອອກໄປ ຂໍໃຫ້ທີ່ຮັກຂອງຂ້ອຍເຂົ້າມາໃນສວນຂອງເຂົາ ແລະຮັບປະທານຜົນລະໄມ້
ອັນໂອຊາເຖີດ

# 5

Chapter 5

1 ນ້ອງຂອງອ້າຍເອີຍ ເຈົ້າສາວຂອງອ້າຍ ອ້າຍເຂົ້າມາໃນສວນຂອງອ້າຍແລ້ວ ອ້າຍມາເກັບເອົາໄມ້ຢາງຫອມ
ຂອງອ້າຍພ້ອມກັບໄມ້ສີສຽດຂອງອ້າຍແລ້ວ ອ້າຍດື່ມເຫລົ້າອະງຸ່ນກັບນ້ຳນົມຂອງອ້າຍແລ້ວ ໂອ ສະຫາຍທັງ
ຫລາຍ ຈົ່ງຮັບປະທານ ແລະຈົ່ງດື່ມເຖີດ ທ່ານຜູ້ເປັນທີ່ຮັກເອີຍ ຈົ່ງດື່ມໃຫ້ອີ່ມຫນຳເຖີດ

Another Dream

2 ຂ້ອຍຫລັບແລ້ວ ແຕ່ໃຈຂອງຂ້ອຍຍັງຕື່ນຢູ່ ຄືມີສຽງເຄາະຂອງທີ່ຮັກຂອງຂ້ອຍເວົ້າວ່າ, “ນ້ອງສາວເອີຍ ທີ່ຮັກ
ຂອງອ້າຍເອີຍ ເປີດປະຕູໃຫ້ອ້າຍແດ່ ແມ່ນົກເຂົາຂອງອ້າຍເອີຍ ແມ່ຄົນງາມຂອງອ້າຍເອີຍ ເພາະຫົວຂອງ
ອ້າຍກໍຖືກນ້ຳຄ້າງກໍເຕັມຢູ່ເທິງຫົວ ແລະເສັ້ນຜົມຂອງອ້າຍກໍຊຸ່ມດ້ວຍລະອອງນ້ຳຟ້າແຫ່ງຣາຕຣີການ”
3 ຂ້ອຍແກ້ເສື້ອຂອງຂ້ອຍອອກເສັຽແລ້ວ ເຫດໃດຂ້ອຍຈຶ່ງຕ້ອງນຸ່ງເສື້ອຄືນອີກ ຂ້ອຍລ້າງຕີນຂອງຂ້ອຍແລ້ວ ເປັນ
ຫຍັງຈະໃຫ້ຕີນຂອງຂ້ອຍກັບເປື້ອນໄປອີກ
4 ທີ່ຮັກຂອງຂ້ອຍສອດມືຂອງເຂົາເຂົ້າມາທາງຮູປະຕູ ແລະໃຈຂ້ອຍກໍເຕັ້ນແຮງເຖິງເຂົາ

5 ຂ້ອຍລຸກຂຶ້ນໄປເປີດປະຕູໃຫ້ທີ່ຮັກຂອງຂ້ອຍ ແລະມືຂອງຂ້ອຍທຳໃຫ້ໄມ້ຢາງຫອມຢົດ ແລະນີ້ວຂອງຂ້ອຍທຳໃຫ້ນ້ຳໄມ້ຫອມຍ້ອຍເທິງຂໍໄຂປະຕູ

6 ຂ້ອຍເປີດປະຕູໃຫ້ທີ່ຮັກຂອງຂ້ອຍ ແຕ່ທີ່ຮັກຂອງຂ້ອຍກັບໄປເສັຽແລ້ວ ເມື່ອເຂົາກັບໄປ ຂ້ອຍມົວຕົກຕະລຶງ ຂ້ອຍສແວງຫາເຂົາ ແຕ່ຂ້ອຍຫາເຂົາບໍ່ພົບ ຂ້ອຍຮ້ອງຮຽກເຂົາ ແຕ່ເຂົາບໍ່ໄດ້ຂານຕອບ

7 ຄົນຍາມເຫັນຂ້ອຍ ຂນະທີ່ກວດເວນໃນເມືອງ ເຂົາຕີຂ້ອຍ ເຂົາທຳໃຫ້ຂ້ອຍບາດເຈັບ ຄົນຍາມຮັກສາກຳແພງເມືອງຍາດຊີງເອົາຜ້າຄຸມຕົວຈາກຂ້ອຍໄປ

8 ໂອ ບຸດຕຣີແຫ່ງເຢຣູຊາເລັມເອີຍ ຂ້ອຍຂໍໃຫ້ພວກເຈົ້າສາບານວ່າ ຖ້າຜູ້ໃດໄດ້ພົບທີ່ຮັກຂອງຂ້ອຍ ເຈົ້າຈະຮັບປາກບອກເຂົາວ່າ ຂ້ອຍກຳລັງເປັນໄຂ້ໃຈ

**ເຈົ້າສາວສັນເສີນເຈົ້າບ່າວ**

Colloquy of Friends and Bride

9 ໂອ ຄູ່ຮັກຂອງອ້າຍນັ້ນວິເສດຫຍັງໄປກວ່າຄູ່ຮັກຂອງຄົນອື່ນຫລື ແມ່ສາວງາມລ້ຳເລີດໃນຖ້າມກາງສາວອື່ນໆ ຄູ່ຮັກຂອງອ້າຍນັ້ນວິເສດຫຍັງໄປກວ່າຄູ່ຮັກຂອງຄົນອື່ນຫລື ອ້າຍຈຶ່ງໄດ້ມາໃຫ້ພວກຂ້ອຍສາບານໃຫ້ເຊັ່ນນັ້ນ

10 ທີ່ຮັກຂອງຂ້ອຍ ຜິວເປັ່ງປັ່ງອິ່ມເລືອດ ເຂົາເປັນນຶ່ງໃນຖ້າມກາງຫມື່ນຄົນ

11 ຫົວຂອງເຂົາດັ່ງຄຳນົພຄຸນ ຜົມຂອງເຂົາຫຍິກ ແລະດຳເຫມືອນນົກກາ

12 ຕາຂອງເຂົາປຽບເຫມືອນນົກເຂົາທີ່ຮີມຫ້ວຍ ອາບນ້ຳນົມ ແລະຈັບຢູ່ທີ່ຮີມກະແສນ້ຳເຕັມຝັ່ງ

13 ແກ້ມຂອງເຂົາເຫມືອນຢ່າງລານປູກໄມ້ສີສຽດ ສິ່ງກິ່ນຫອມຫວນ ຮີມຝີປາກຂອງເຂົາເຫມືອນດອກລີລີ ຢົດນ້ຳຢາງໄມ້ຫອມ

14 ມືຂອງເຂົາເຫມືອນດັ່ງວົງແຫວນຄຳ ອັນປະດັບດ້ວຍໄພທູນ

15 ຂາຂອງເຂົາຫມືອນດັ່ງເສົາຫີນອ່ອນ ຕັ້ງເທິງຖານຄຳນົພຄຸນ ຮູບຮ່າງຂອງເຂົາມີສງ່າດັ່ງເລບານອນ ປະເສີດຢ່າງໄມ້ສົນ

16 ວາຈາຂອງເຂົາອ່ອນຫວານທີ່ສຸດ ທຸກສິ່ງໃນຕົວເຂົາລ້ວນແຕ່ຫນ້າຮັກຫນ້າໃຄ່ ໂອ ເຫລົ່າບຸດຕຣີແຫ່ງເຢຣູຊາເລັມເອີຍ ນີ້ຄືທີ່ຮັກຂອງຂ້ອຍ ແລະນີ້ຄືເພື່ອນຍາກຂອງຂ້ອຍ

## 6

**ພວກຜູ້ຍິງ:**

The Women

1 ແມ່ສາວງາມລ້ຳເລີດໃນຖ້າມກາງສາວອື່ນໆ ຄູ່ຮັກຂອງອ້າຍຢູ່ທີ່ໃດ ຄູ່ຮັກຂອງອ້າຍກັບໄປໃສແລ້ວ ເພື່ອພວກເຮົາຈະໄປສືບຫາກັບອ້າຍ

**ຍິງສາວ:**

2 ທີ່ຮັກຂອງຂ້ອຍ ລົງໄປໃນສວນຂອງເຂົາ ເພື່ອຈະໄປທີ່ລານປູກໄມ້ສີສຽດ ແລະເພື່ອຈະໄປລ້ຽງຝູງສັດໃນສວນກັບເພື່ອຈະເກັບດອກລີລີ

3 ຕົວຂ້ອຍເປັນກຳມະສິດຂອງທີ່ຮັກຂອງຂ້ອຍ ແລະທີ່ຮັກກໍເປັນຂອງຂ້ອຍ ເຂົາລ້ຽງຝູງສັດຢູ່ຖ້າມກາງຫມູ່ຕົ້ນລີລີ

**ເຈົ້າບ່າວສັນເສີນເຈົ້າສາວ**

The Bride’s Matchless Beauty

4 ທີ່ຮັກຂອງອ້າຍເອີຍ ນ້ອງຊ່າງງາມຫລາຍເຫມືອນເມືອງຕີຣ໌ຊາ ແລະງາມເຢັນຕາດັ່ງເຢຣູຊາເລັມ ນາງເປັນສະງ່າຫນ້າເກງຂາມດັ່ງກອງທັບມີທຸງປະຈຳ

5 ຂໍຫັນໜ້າໄປຈາກອ້າຍເຖີດ ເພາະວ່າອ້າຍແພ້ສາຍຕາຂອງນ້ອງແລ້ວ ຜົມນ້ອງດຸດດັ່ງຝູງແບ້ ທີ່ເຄື່ອນໄປມາ ຕາມເນີນພູກີເລອາດ

6 ແຂ້ວຂອງນ້ອງດັ່ງຝູງແກະໂຕເມັຽ ຊຶ່ງຂຶ້ນມາຈາກການຊໍາຮະລ້າງ ມີລູກແຝດຕິດມາທຸກໂຕ ແລະບໍ່ມີໂຕໃດແຫ້ງລູກ

7 ພວງແກ້ມຂອງນ້ອງເຫມືອນຫມາກພິລາຜ່າກາງຢູ່ໃນຜ້າຄຸມ

8 ມີມະເຫສີຫົກສິບອົງ ແລະນາງຫ້າມແປດສິບຄົນ ສາວໆອີກຫລາຍເຫລືອຄະນາ

9 ແມ່ນົກເຂົາຂອງອ້າຍ ແມ່ຄົນງາມຂອງອ້າຍ ເປັນຄົນດຽວ ນ້ອງເປັນຄົນດຽວຂອງແມ່ທີ່ເປັນຫົວຮັກຫົວໃຄ່ຂອງຜູ້ໃຫ້ກໍາເນີດ ສາວໆທັງຫລາຍເຫັນນ້ອງ ແລະເອີ້ນວ່າ ຜາສຸກ ທັງເຫລົ່າມະເຫສີ ແລະເຫລົ່ານາງຫ້າມ ກໍສັນເສີນຍ້ອງຍໍນ້ອງວ່າ,

10 "ແມ່ສາວຄົນນີ້ເປັນຜູ້ໃດຫນໍ ເມື່ອເບິ່ງລົງກໍດັ່ງຮຸ່ງອາຣຸນຕອນເຊົ້າ ແຈ່ມຈັດດັ່ງດວງຈັນ ກະຈ່າງຈ້າດັ່ງດວງສຸຣິຍັນ ສະງ່າຫນ້າເກງຂາມດັ່ງກອງທັບມີທຸງປະຈໍາ

11 ຂ້ອຍລົງໄປໃນສວນຫມາກມັນ ເພື່ອຈະເບິ່ງຫມູ່ໄມ້ຊຽວຕາມຮ່ອມພູວ່າເຄືອອະງຸ່ນມີດອກຈູມອອກຫລືບໍ່ ແລະເພື່ອຈະເບິ່ງວ່າຫມາກພິລາມີດອກແລ້ວຫລືຍັງ

12 ເມື່ອຂ້ອຍຍັງບໍ່ທັນຮູ້ຕົວ ມະໂນຄະຕິຂອງຂ້ອຍໄດ້ກະທໍາໃຫ້ຂ້ອຍເຄີ້ມໄປວ່າໄດ້ຢູ່ໃນຣົດຊົງຄຽງຂ້າງເຈົ້ານາຍຂອງຂ້ອຍ

13 ກັບມາເຖີດ ກັບມາເຖີດ ແມ່ຊາວຊູລາມ ກັບມາເຖີດ ກັບມາເຖີດ ເພື່ອພວກຂ້ອຍຈະໄດ້ເຈົ້າໄວ້ຊົມເຊີຍ ເປັນຫຍັງເຈົ້າທັງຫລາຍຈຶ່ງຢາກເບິ່ງຕົວແມ່ຊາວຊູລາມ ດັ່ງມອງການເຕັ້ນລໍາແຫ່ງມະຮານາອິມ

## 7 ບົດເພງທີສາມ

Expressions of Praise

**ຄົນຮັກຂອງນາງ:**

1 ໂອ ຍິງທີ່ງາມເລີດ ຕີນນ້ອງທີ່ສຸບໃສ່ເກີບຢູ່ນັ້ນງາມຫລາຍ ທ້າຍຂອງນ້ອງງາມເຫມືອນນັກສິນລະປິນແຕ້ມ

2 ສະບືນ້ອງເຫມືອນຂັນນໍ້າ ຊຶ່ງເກັບຮັກສາກິ່ນເຫລົ້າອະງຸ່ນບໍ່ໃຫ້ເຫີຍໄປ ທ້ອງນ້ອງເຫມືອນກອງເຂົ້າທີ່ມີດອກຊ້ອນອ້ອມຮອບໄວ້

3 ນົມຂອງນ້ອງງາມເຫມືອນລູກກວາງຝາແຝດ

4 ລໍາຄໍຂອງນ້ອງເຫມືອນຫໍຄອຍສູງທີ່ທໍາດ້ວຍງາຊ້າງ ຕາຂອງນ້ອງເຫມືອນຫນອງນໍ້າຢູ່ໃນເມືອງເຮັສໂບນ ຊຶ່ງຫນອງນີ້ຢູ່ໃກ້ປະຕູກໍາແພງເມືອງ ດັງນ້ອງງາມດັ່ງຫໍຄອຍສູງທີ່ເລບານອນ ຊຶ່ງເປັນບ່ອນເຝົ້າຍາມຢູ່ກົງກັນຂ້າມກັບເມືອງດາມັສກັສ

5 ຫົວຂອງນ້ອງງສູງດັ່ງພູກາຣ໌ເມນ ຜົມເປັຽນ້ອງມີສີສະງ່າງາມດັ່ງສີມ່ວງ ຄວາມງາມຂອງມັນທໍາໃຫ້ພຣະຣາຊາກາຍເປັນຈໍາເລີຍຮັກ

6 ທີ່ຮັກຂອງອ້າຍ ນ້ອງງາມທີ່ສຸດ ຄວາມຍິນດີຢ່າງພາກພູມໃຈທີ່ນ້ອງມອບໃຫ້ອ້ານນັ້ນມີລົ້ນເຫລືອ

7 ນ້ອງເຕັມໄປດ້ວຍຄວາມງົດງາມເຫມືອນດັ່ງຕົ້ນຕານ ນົມນ້ອງເຫມືອນແຊງຫມາກຕານ

8 ອ້າຍຈະປີນຂຶ້ນຕົ້ນຕານ ແລະປົດເອົາຫມາກຂອງມັນມາ ນົມນ້ອງປຽບເຫມືອນພົ້ວຫມາກອະງຸ່ນສໍາລັບອ້າຍລົມຫາຍໃຈຂອງນ້ອງເຫມືອນກິ່ນຫອມຂອງຫມາກໂປມ

9 ແລະປາກຂອງນ້ອງເຫມືອນດັ່ງເຫລົ້າອະງຸ່ນຊັ້ນດີ  ຂໍໃຫ້ເຫລົ້າອະງຸ່ນໄຫລຊື່ໄປຫາຄົນຮັກຂອງຂ້ອຍ ຂໍໃຫ້ໄຫລໄປຜ່ານສົບ ແລະແຂ້ວຂອງເຂົາ

10 ຂ້ອຍເປັນຂອງຄົນຮັກຂອງຂ້ອຍ ແລະເຂົາກໍຕ້ອງການຂ້ອຍ

**ຍິງສາວ:**

11 ທີ່ຮັກ ຈົ່ງມາພີ້ ໃຫ້ພວກເຮົາອອກໄປທົ່ງນາດ້ວຍກັນ ແລະໄປນອນຄ້າງຄືນຢູ່ຕາມບ້ານ

12 ພວກເຮົາຈະລຸກແຕ່ເຊົ້າໄປເບິ່ງຕົ້ນຫມາກອະງຸ່ນ ເພື່ອຢາກຮູ້ວ່າມັນປົ່ງຍອດແລ້ວຫລືຍັງ ດອກຂອງມັນບານແລ້ວບໍ ແລະເພື່ອເບິ່ງວ່າຕົ້ນພິລາມີດອກແລ້ວຫລືບໍ່ ຢູ່ບ່ອນນັ້ນນ້ອງຈະມອບຄວາມຮັກໃຫ້ແກ່ອ້າຍ

13 ອ້າຍຈະດົມກິ່ນຫອມຂອງຫມາກເຂືອ ແລະພວກເຮົາຈະມີຫມາກໄມ້ດີໆທຸກຢ່າງຢູ່ຕໍ່ຫນ້າເຮືອນ ທີ່ຮັກ ຫມາກໄມ້ຫອມຫວານທີ່ເກັບໄວ້ແຕ່ດົນ ແລະເກັບດຽວນີ້ ນ້ອງໄດ້ຮັກສາໄວ້ໃຫ້ອ້າຍສເມີ

# 8

Chapter 8

1 ນ້ອງປາຖນາຢາກໃຫ້ອ້າຍເປັນຄືງໆຂອງນ້ອງ ຊຶ່ງເປັນຜູ້ທີ່ແມ່ຂອງນ້ອງໄດ້ລ້ຽງມາ ເພື່ອວ່າຖ້ານ້ອງພົບອ້າຍຢູ່ຕາມຖນົນຫົນທາງ ນ້ອງຈະຈູບອ້າຍໄດ້ໂດຍບໍ່ເກງກົວຄຳນິນທາຂອງໃຜທັງຫມົດ

2 ແລະນ້ອງກໍຈະພາອ້າຍໄປຫາແມ່ຂອງນ້ອງຢູ່ເຮືອນ ນ້ອງຈະເອົາເຫລົ້າອະງຸ່ນຢ່າງດີ ແລະນ້ຳຫມາກພິລາໃຫ້ອ້າຍດື່ມ

3 ເຂົາເອົາມືກ້ຳຊ້າຍຮອງຫົວຂ້ອຍ ແລະເອົາມືຂວາກອດຂ້ອຍໄວ້

4 ຍິງນະຄອນເຢຣູຊາເລັມເອີຍ ຈົ່ງສັນຍາຕໍ່ຂ້ອຍເທີນວ່າ ເຈົ້າຈະບໍ່ປຸກຄວາມຮັກຂອງຂ້ອຍກ່ອນເວລາອັນສົມຄວນ

**ພວກຜູ້ຍິງ:**

5 ຜູ້ທີ່ຂຶ້ນມາຈາກຖິ່ນກັນດານ ທີ່ຢູ່ໃນອ້ອມແຂນຜູ້ບ່າວນັ້ນແມ່ນໃຜ

**ຍິງສາວ:**

ນ້ອງໄດ້ປຸກອ້າຍລຸກຂຶ້ນຢູ່ໃຕ້ຕົ້ນຫມາກໂປມ ຊຶ່ງເປັນບ່ອນທີ່ແມ່ອ້າຍຖືພາ ແລະເປັນບ່ອນທີ່ອ້າຍເກີດ

6 ນອກຈາກນ້ອງແລ້ວ ຢ່າຮັກຄົນອື່ນ ຂໍຢ່າໃຫ້ມີຍິງອື່ນຢູ່ໃນອ້ອມກອດຂອງອ້າຍ ຄວາມຮັກມີອຳນາດເທົ່າກັບຄວາມຕາຍ ຄວາມຫລົງໄຫລຮ້າຍແຮງເຫມືອນປ່າຊ້າ ມັນໄດ້ໄຫມ້ເຫມືອນແປວໄຟ ແລະໄຫມ້ລຸກລາມຢ່າງເຕັມທີ

7 ນ້ຳຫລວງຫລາຍກໍມອດ ຫລືຖ້ວມມັນບໍ່ໄດ້ ແຕ່ວ່າຖ້າມີຄົນໃດເອົາຄວາມມັ່ງຄັ່ງສົມບູນຂອງຕົນມາຊື້ເອົາຄວາມຮັກ ເຂົາກໍຈະໄດ້ຮັບແຕ່ຄວາມຫມິ່ນປມາດ

**ພວກຜູ້ຍິງ:**

8 ພວກຂ້ອຍຍັງມີນ້ອງສາວຢູ່ຄົນນຶ່ງ ເຂົາຍັງບໍ່ທັນເປັນສາວ ແລະຫນ້າເອິກກໍບໍ່ທັນເຕັມ ພວກຂ້ອຍຈະທຳຢ່າງໃດກັບເຂົາ ຖ້າມີຊາຍຫນຸ່ມເຂົ້າມາຂໍແຕ່ງງານກັບເຂົາ

9 ຖ້າເຂົາເປັນກຳແພງ ພວກຂ້ອຍຈະເອົາແທ່ງເງິນສ້າງຫໍຄອຍປ້ອງກັນເຂົາໄວ້ ຖ້າເຂົາເປັນປະຕູກຳແພງ ພວກຂ້ອຍຈະເອົາແຜ່ນໄມ້ສົນໃສ່ໄລປ້ອງກັນເຂົາໄວ້

**ຍິງສາວ:**

10 ຂ້ອຍເປັນກຳແພງ ແລະນົມຂ້ອຍເປັນເຫມືອນຫໍຄອຍສູງ ໃນສາຍຕາຂອງຄົນຮັກແລ້ວ ຂ້ອຍເປັນຜູ້ນຶ່ງທີ່ນຳຄວາມສຸກມາໃຫ້

**ຄົນຮັກຂອງນາງ:**

11 ກະສັດໂຊໂລໂມນມີສວນອະງຸ່ນທີ່ບາອານຮາໂມນ ພຣະອົງຊົງໃຫ້ຄົນມາເຊົ່າສວນນັ້ນ ແຕ່ຜູ້ເຊົ່າທຸກຄົນຕ້ອງຈ່າຍເງິນພັນຫລຽນໃຫ້

12 ກະສັດໂຊໂລໂມນເອີຍ ຂ້ອຍມີສວນອະງຸ່ນຂອງຂ້ອຍເອງ ພຣະອົງຊົງຮັບເອົາເງິນພັນຫລຽນຂອງພຣະອົງໄປເທີນ ແລະຜູ້ເຊົ່າສວນນັ້ນຈະໄດ້ຮັບຄືນລະສອງຮ້ອຍ

13 ນ້ອງເອີຍ ຫມູ່ເພື່ອນຂອງອ້າຍກຳລັງຟັງຢູ່ ຂໍໃຫ້ອ້າຍໄດ້ຍິນສຽງນ້ອງຈາກສວນນັ້ນເທີນ

**ຍິງສາວ:**

14 ທີ່ຮັກຂອງນ້ອງ ຂໍອ້າຍຈົ່ງເປັນເຫມືອນເຍືອງ ແລະກວາງຫນຸ່ມ ແລະມາຫານ້ອງທີ່ພູຕົ້ນກະຖິນ